ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ. ເລກທີ 08/ ສພຊ

ນະຄອນຫຼວງວຽງຈັນ, ວັນທີ 9 ພະຈິກ 2005

# ກົດໝາຍ
# ວ່າດ້ວຍມໍລະດົກແຫ່ງຊາດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍມໍລະດົກແຫ່ງຊາດ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ນໍາໃຊ້, ປົກປັກຮັກສາ, ອະນຸລັກ, ບູລະນະ, ປະຕິສັງຂອນມໍລະດົກແຫ່ງຊາດ ກໍຄືກໍານົດສິດ, ໜ້າທີ່ ແລະ ພັນທະຂອງການຈັດຕັ້ງລັດ, ສັງຄົມ ແລະ ບຸກຄົນ ເພື່ອຮັກສາໄວ້ຊຶ່ງຄຸນຄ່າຂອງມໍລະດົກແຫ່ງຊາດ ທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ແນໃສ່ສຶກສາອົບຮົມພົນລະເມືອງໃຫ້ມີນໍ້າໃຈຮັກຊາດ, ຮັກມູນເຊື້ອອັນດີງາມຂອງຊາດໃຫ້ເປັນພື້ນຖານດ້ານຈິດໃຈ ແລະ ເປັນປັດໃຈຄໍ້າປະກັນການຍືນຍົງຄົງຕົວຂອງຊາດລາວຕະຫຼອດໄປ.

**ມາດຕາ 2. ມໍລະດົກແຫ່ງຊາດ**

ມໍລະດົກແຫ່ງຊາດ ແມ່ນຜະລິດຕະພັນທີ່ມະນຸດສ້າງຂຶ້ນ ຫຼືເກີດຂຶ້ນເອງໂດຍທໍາມະຊາດ ທີ່ມີຄຸນຄ່າສູງທາງດ້ານວັດທະນະທໍາ, ປະຫວັດສາດ ຫຼື ທໍາມະຊາດ, ເປັນຊັບສົມບັດອັນລໍ້າຄ່າ, ເປັນກໍາມະສິດລວມຂອງວົງຄະນະຍາດແຫ່ງຊາດລາວ ຊຶ່ງພາກສ່ວນໜຶ່ງຖືກຮັບຮອງເປັນມໍລະດົກພາກພື້ນ ແລະ ມໍລະດົກໂລກ.

ມໍລະດົກແຫ່ງຊາດ ປະກອບດ້ວຍມໍລະດົກທາງດ້ານວັດທະນະທໍາ, ປະຫວັດສາດ ແລະ ທໍາມະຊາດ ທີ່ເປັນວັດຖຸ, ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ, ມີຊີວິດ ຫຼື ບໍ່ມີຊີວິດ ຊຶ່ງຢັ້ງຢືນເຖິງຄວາມເປັນມາຂອງຊາດລາວ, ຄົນລາວໃນແຕ່ລະຍຸກແຕ່ລະສະໄໝ.

ມໍລະດົກແຫ່ງຊາດ ມີທັງຢູ່ພາຍໃນ ແລະຕ່າງປະເທດ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ໝາຍເຖິງມໍລະດົກທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ ທີ່ເປັນສົມບັດຂອງຊາດ, ໄດ້ຮັບການສືບທອດກັນມາແຕ່ລະຍຸກແຕ່ລະສະໄໝ.
2. ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ໝາຍເຖິງມໍລະດົກທີ່ປະກອບສ້າງຂຶ້ນໂດຍທຳມະຊາດເອງ ຊຶ່ງມີຄຸນຄ່າສູງທາງດ້ານທັດສະນີຍະພາບ ແລະ ຊີວະນາໆພັນທີ່ຍັງຄົງຄວາມສົມບູນທາງທຳມະຊາດດັ້ງເດີມ ແລະ ຄວາມສວຍສົດງົດງາມ.
3. ສົມບັດມີ່ງເມືອງ ໝາຍເຖິງມໍລະດົກຕົກທອດ ທີ່ມີຄຸນຄ່າສູງ, ໂດດເດັ່ນເປັນພິເສດທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດທີ່ຫາຍາກ ແລະ ເປັນເອກະລັກຂອງຊາດ ທີ່ເປັນວັດຖຸ, ບໍ່ເປັນວັດຖຸ, ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ.
4. ຮ່ອງຮອຍປະຫວັດສາດ ໝາຍເຖິງສະຖານທີ່, ສິ່ງກໍ່ສ້າງທາງດ້ານສະຖາປັດຕະຍະກຳ, ບູຮານສະຖານ ຊຶ່ງມີວັດຖຸບູຮານ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ ແລະວິທະຍາສາດ.
5. ວັດຖຸບູຮານ ໝາຍເຖິງຜະລິດຕະພັນທາງດ້ານວັດຖຸ ທີ່ສ້າງຂຶ້ນໂດຍມະນຸດອັນເປັນຫຼັກຖານຢັ້ງຢືນເຖິງປະຫວັດສາດແຫ່ງຂະບວນວິວັດ ຂອງສັງຄົມມະນຸດ.
6. ແຫຼ່ງວັດຖຸບູຮານ ໝາຍເຖິງສະຖານທີ່ ຊຶ່ງວັດຖຸບູຮານສະຖານບູຮານ ແລະ ບັນດາຮ່ອງຮອຍຫຼັກຖານທາງປະຫວັດສາດ ຖືກຄົ້ນພົບຢູ່ຮ່ວມກັນເປັນກຸ່ມ.
7. ວັດຖຸຈຳລອງແບບ ໝາຍເຖິງວັດຖຸທີ່ສ້າງຂຶ້ນໃໝ່ ໂດຍການກ່າຍເອົາແບບວັດຖຸບູຮານ ຊຶ່ງມີລັກສະນະຮູບຊົງ, ສັດສ່ວນ, ສີສັນ, ລວດລາຍ, ການຕົບແຕ່ງ ແລະຈຸດພິເສດອື່ນໆ ຕາມແບບສະບັບເດີມ.
8. ສະຖາປັດຕະຍະກຳ ໝາຍເຖິງສິ່ງກໍ່ສ້າງແຫ່ງສິລະປະ ທີ່ໂດດເດັ່ນທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕິດພັນກັບແບບແຜນດຳລົງຊີວິດຂອງປະຊາຊົນບັນດາເຜົ່າ, ຂອງບັນພະບຸລຸດ ແລະ ວິລະບຸລຸດແຫ່ງຊາດ.
9. ການປົກປັກຮັກສາມໍລະດົກແຫ່ງຊາດ ໝາຍເຖິງການປ້ອງກັນບໍ່ໃຫ້ຖືກລັກ, ທຳລາຍ, ຈູດເຜົາ, ຖືກເສຍຫາຍຈາກທຳມະຊາດ ຫຼື ຖືກເອົາໄປນຳໃຊ້ໂດຍບໍ່ຖືກຕ້ອງຕາມກົດໝາຍ.
10. ການອະນຸລັກມໍລະດົກແຫ່ງຊາດ ໝາຍເຖິງການຮັກສາໄວ້ຊຶ່ງຄຸນຄ່າ, ຮ່ອງຮອຍ, ສີສັນ ທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດຂອງມໍລະດົກແຫ່ງຊາດ ເພື່ອບໍ່ໃຫ້ສູນຫາຍ ຫຼື ເສື່ອມເສຍໄປ.

11. ການບູລະນະມໍລະດົກແຫ່ງຊາດ ໝາຍເຖິງຂະບວນການສ້ອມແປງ, ຮັກສາຮູບແບບ, ລວດລາຍ ແລະ ລາຍລະອຽດເດີມຂອງອາຄານ, ສິ່ງກໍ່ສ້າງໃຫ້ຖືກຕ້ອງຕາມຍຸກສະໄໝທີ່ແນ່ນອນ ໂດຍຕໍ່ເຕີມ ແລະ ເສີມສ່ວນດັ້ງເດີມທີ່ຂາດຫາຍໄປໃຫ້ສົມບູນ.
12. ການປະຕິສັງຂອນມໍລະດົກແຫ່ງຊາດ ໝາຍເຖິງການບູລະນະ, ສ້າງຄືນໃໝ່ ເພື່ອໃຫ້ວັດຖຸ ຫຼື ສິ່ງກໍ່ສ້າງດ້ານປະຫວັດສາດ, ວັດທະນະທໍາ, ທັດສະນີຍະພາບທໍາມະຊາດ ຄືນສູ່ສະພາບ ແລະ ເອກະລັກດັ້ງເດີມ.
13. ມໍລະດົກສະຖານ ໝາຍເຖິງບູຮານສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສະຖານທີ່ທໍາມະຊາດ ແລະ ສະຖາປັດຕະຍະກໍາ ຊຶ່ງມີຄຸນຄ່າທາງດ້ານວັດທະນະທໍາ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ, ທັດສະນີຍະພາບ ທີ່ສືບທອດກັນມາ.
14. ປູຊະນີຍະສະຖານ ໝາຍເຖິງສະຖານທີ່ ຊຶ່ງເປັນບ່ອນເຄົາລົບບູຊາຂອງປະຊາຊົນທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດ.
15. ອະນຸສອນສະຖານ ໝາຍເຖິງສະຖານທີ່ລະນຶກເຖິງວິລະກໍາຂອງບັນພະບຸລຸດ ແລະ ຂະບວນການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ເພື່ອຄວາມຊົງຈໍາຂອງອະນຸຊົນຄົນຮຸ່ນຫຼັງ.
16. ຫໍພິພິດທະພັນ ໝາຍເຖິງສະຖານທີ່ເກັບມ້ຽນ, ອະນຸລັກຮັກສາ ແລະ ວາງສະແດງວັດຖຸພັນກ່ຽວກັບວັດທະນະທໍາ, ປະຫວັດສາດ, ທໍາມະຊາດ, ວິທະຍາສາດ ແລະ ສັງຄົມ ເພື່ອຮັບໃຊ້ການຄົ້ນຄວ້າ, ສຶກສາອົບຮົມ, ທັດສະນະສຶກສາ ແລະ ການທ່ອງທ່ຽວຂອງພາຍໃນ ແລະຕ່າງປະເທດ.
17. ຊັບສົມບັດອັນລໍ້າຄ່າ ໝາຍເຖິງຊັບສົມບັດທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ.

## ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບມໍລະດົກແຫ່ງຊາດ

ການພັດທະນາເສດຖະກິດ-ສັງຄົມ ຕ້ອງໄປຄຽງຄູ່ກັບການປົກປັກຮັກສາ ແລະ ອະນຸລັກມໍລະດົກແຫ່ງຊາດ.

ລັດສົ່ງເສີມ ແລະສ້າງເງື່ອນໄຂໃຫ້ບຸກຄົນ, ການຈັດຕັ້ງທີ່ຢູ່ພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດ ເພື່ອເຮັດໃຫ້ຍືນຍົງຄົງຕົວ.

ລັດສົ່ງເສີມການຄົ້ນຄວ້າ, ການປະດິດແຕ່ງ, ການເຜີຍແຜ່ຄຸນຄ່າທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າຂອງມໍລະດົກແຫ່ງຊາດ ພ້ອມທັງຈໍາກັດ, ແກ້ໄຂສິ່ງກີດໜ່ວງຖ່ວງດຶງຄວາມກ້າວໜ້າຂອງປະຊາຊົນລາວບັນດາເຜົ່າ ແລະ ບາດກ້າວເດີນຂອງປະເທດຊາດ.

ລັດຮັບຮູ້ກໍາມະສິດກ່ຽວກັບມໍລະດົກແຫ່ງຊາດຂອງການຈັດຕັ້ງ ແລະ ບຸກຄົນ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 5. ພັນທະຂອງພົນລະເມືອງ**

ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ອາໃສຢູ່ບົນດິນແດນຂອງ ສປປ ລາວ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນການປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນ ມໍລະດົກແຫ່ງຊາດ.

ຊາວຕ່າງປະເທດ, ນັກທ່ອງທ່ຽວທີ່ເຂົ້າມາ ສປປ ລາວ ກໍມີພັນທະປະກອບສ່ວນເຂົ້າໃນ ການປົກປັກຮັກສາ ແລະອະນຸລັກມໍລະດົກແຫ່ງຊາດເຊັ່ນດຽວກັນ.

**ມາດຕາ 6. ການຮ່ວມມືສາກົນ**

ລັດມີນະໂຍບາຍສົ່ງເສີມການພົວພັນ, ການຮ່ວມມືກັບສາກົນກ່ຽວກັບມໍລະດົກແຫ່ງຊາດ ເພື່ອແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຄົ້ນຄວ້າວິທະຍາສາດ, ຝຶກອົບຮົມວິຊາການ, ເຜີຍແຜ່ ວັດທະນະທໍາ, ວາງສະແດງ, ຍາດແຍ່ງທຶນຮອນ ແລະ ອື່ນໆ.

## ພາກທີ II
## ມໍລະດົກແຫ່ງຊາດ

### ໝວດທີ 1
### ມໍລະດົກທາງດ້ານວັດທະນະທໍາ

**ມາດຕາ 7. ປະເພດມໍລະດົກທາງດ້ານວັດທະນະທໍາ**

ມໍລະດົກທາງດ້ານວັດທະນະທໍາ ມີສອງປະເພດຄື :

- ມໍລະດົກທາງດ້ານວັດທະນະທໍາທີ່ເປັນວັດຖຸ;
- ມໍລະດົກທາງດ້ານວັດທະນະທໍາທີ່ບໍ່ເປັນວັດຖຸ.

**ມາດຕາ 8. ມໍລະດົກທາງດ້ານວັດທະນະທໍາທີ່ເປັນວັດຖຸ**

ມໍລະດົກທາງດ້ານວັດທະນະທໍາ ທີ່ເປັນວັດຖຸ ແມ່ນມໍລະດົກທີ່ມີຕົວຕົນ, ເປັນຊັບສິນບັດ ອັນລ້ຳຄ່າທາງດ້ານວັດທະນະທໍາ ຊຶ່ງລວມມີສິ່ງທີ່ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ ເປັນເອກະລັກເປັນຕົ້ນ: ວັດຖຸບູຮານ, ເຄື່ອງຫັດຖະກໍາເຊັ່ນ: ຜ້າແພລາຍຈົກ, ລາຍມັດໝີ່, ວິຈິດຕະ ກໍາ, ເຄື່ອງອຸປະໂພກ, ບໍລິໂພກເຊັ່ນ: ເຂົ້າໜຽວ, ປາແດກ, ເຄື່ອງດົນຕີພື້ນເມືອງເຊັ່ນ: ແຄນ..., ເຄື່ອງມືການຜະລິດ, ຈາລຶກບູຮານ, ສະຖານບູຮານ, ປູຊະນິຍະສະຖານ ແລະ ອື່ນໆ.

**ມາດຕາ 9. ມໍລະດົກທາງດ້ານວັດທະນະທໍາທີ່ບໍ່ເປັນວັດຖຸ**

ມໍລະດົກທາງດ້ານວັດທະນະທຳທີ່ບໍ່ເປັນວັດຖຸ ແມ່ນມໍລະດົກທີ່ບໍ່ມີຕົວຕົນ, ເປັນຊັບສິນບັດອັນລ້ຳຄ່າທາງດ້ານວັດທະນະທຳເຊັ່ນ: ພູມປັນຍາ, ຄວາມຮູ້, ປັດຊະຍາຂອງມະຫາຊົນ, ຄວາມເຊື່ອຖື, ຮີດຄອງປະເພນີອັນດີງາມ ຊຶ່ງສະແດງອອກໃນວິຖີຊີວິດ, ມາລະຍາດໃນສັງຄົມ, ພາສາ, ຕົວອັກສອນ, ຕົວເລກ, ພື້ນແຜ່ນ, ຕຳນານ, ນິທານ, ສຸພາສິດ, ກາບກອນ, ສຽງດົນຕີພື້ນເມືອງ, ບົດຟ້ອນພື້ນເມືອງ, ສຽງຮ້ອງ, ທຳນອງເພງ, ຂັບລຳ, ຕຳລາຢາພື້ນເມືອງ ແລະອື່ນໆ ທີ່ໄດ້ສືບທອດກັນມາ.

## ໝວດທີ 2
## ມໍລະດົກທາງດ້ານປະຫວັດສາດ

### ມາດຕາ 10. ປະເພດມໍລະດົກທາງດ້ານປະຫວັດສາດ

ມໍລະດົກທາງດ້ານປະຫວັດສາດ ມີສອງປະເພດຄື :

- ມໍລະດົກທາງດ້ານປະຫວັດສາດ ທີ່ເປັນວັດຖຸ ;
- ມໍລະດົກທາງດ້ານປະຫວັດສາດ ທີ່ບໍ່ເປັນວັດຖຸ.

### ມາດຕາ 11. ມໍລະດົກທາງດ້ານປະຫວັດສາດທີ່ເປັນວັດຖຸ

ມໍລະດົກທາງດ້ານປະຫວັດສາດທີ່ເປັນວັດຖຸ ແມ່ນມໍລະດົກທີ່ມີຕົວຕົນ, ເປັນຊັບສິນບັດອັນລ້ຳຄ່າທາງດ້ານປະຫວັດສາດ ຊຶ່ງລວມມີສິ່ງທີ່ເປັນສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ເປັນຕົ້ນແມ່ນ ຫໍ, ໂຮງ; ອາວຸດຍຸດໂທປະກອນ, ພາຫະນະ, ເຄື່ອງອຸປະໂພກ, ເຄື່ອງໃຊ້ສອຍ, ເອກະສານທີ່ບັນທຶກໄວ້; ສະຖານທີ່ປະຫວັດສາດ ເຊັ່ນ: ຖານທີ່ໝັ້ນຂອງຂະບວນການຕໍ່ສູ້ຂອງປະຊາຊົນ, ບັນພະບູລຸດ ແລະ ຜູ້ນຳການປະຕິວັດ, ສະໝໍລະພູມ, ອະນຸສອນສະຖານ...

### ມາດຕາ 12. ມໍລະດົກທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ

ມໍລະດົກທາງດ້ານປະຫວັດສາດທີ່ບໍ່ເປັນວັດຖຸ ແມ່ນມໍລະດົກທາງດ້ານຈິດໃຈ ທີ່ຕິດພັນກັບປະຫວັດສາດແຕ່ລະຍຸກແຕ່ລະສະໄໝເຊັ່ນ: ແນວຄິດ, ທິດສະດີ, ອຸດົມການ ຊຶ່ງສະແດງເຖິງມູນເຊື້ອຮັກຊາດ, ພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນ, ປັນຍາຄວາມຮູ້, ຄວາມສາມາດ, ຍຸດທະສາດ, ສິລະປະຍຸດ, ຍຸດທະວິທີ, ບົດຮຽນໃນການຕໍ່ສູ້, ການນຳພາ, ການປົກຄອງ ແລະ ການສ້າງສາພັດທະນາປະເທດຊາດ.

## ໝວດທີ 3
## ມໍລະດົກທາງດ້ານທຳມະຊາດ

### ມາດຕາ 13. ປະເພດມໍລະດົກທາງດ້ານທຳມະຊາດ

ມໍລະດົກທາງດ້ານທຳມະຊາດ ມີ ສອງປະເພດຄື :

- ມໍລະດົກທາງດ້ານທຳມະຊາດທີ່ມີຄຸນຄ່າທາງທັດສະນີຍະພາບ ;
- ມໍລະດົກທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານວິທະຍາສາດ, ນິເວດວິທະຍາ.

**ມາດຕາ 14. ມໍລະດົກທາງດ້ານທຳມະຊາດທີ່ມີຄຸນຄ່າທາງທັດສະນີຍະພາບ**

ມໍລະດົກທາງດ້ານທຳມະຊາດທີ່ມີຄຸນຄ່າທາງທັດສະນີຍະພາບ ແມ່ນມໍລະດົກທີ່ມີຄວາມສວຍງາມອັນໂດດເດັ່ນ, ອຸດົມສົມບູນໄປດ້ວຍຊີວະນາໆພັນເປັນຕົ້ນ: ປ່າສະຫງວນ, ເຂດອະນຸລັກຊີວະນາໆພັນ, ຖ້ຳທຳມະຊາດ, ນ້ຳຕົກຕາດ, ແກ້ງ, ຄອນ, ແມ່ນ້ຳ, ລຳເຊ, ເກາະດອນ, ພູ, ຜາ, ສັດນ້ຳ, ສັດປ່າ, ຫ້ວຍ, ໜອງ, ຄອງ, ບຶງ ແລະ ອື່ນໆ...

**ມາດຕາ 15. ມໍລະດົກທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ, ວິທະຍາສາດ**

ມໍລະດົກທາງດ້ານທຳມະຊາດທີ່ມີຄຸນຄ່າທາງດ້ານນິເວດວິທະຍາ, ວິທະຍາສາດ ແມ່ນມໍລະດົກອັນລ້ຳຄ່າທາງດ້ານທຳມະຊາດ ທີ່ມີຄວາມສຳຄັນ, ໂດດເດັ່ນທາງດ້ານທໍລະນີສາດ, ຊີວະສາດ ແລະ ພູມສາດ.

## ພາກທີ III
## ລະດັບມໍລະດົກແຫ່ງຊາດ

### ໝວດທີ 1
### ລະດັບມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 16. ລະດັບມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ຈັດແບ່ງເປັນສາມລະດັບດັ່ງນີ້ :

- ລະດັບທ້ອງຖິ່ນ ;
- ລະດັບຊາດ ;
- ລະດັບໂລກ.

**ມາດຕາ17. ລະດັບທ້ອງຖິ່ນ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດລະດັບທ້ອງຖິ່ນ ແມ່ນມໍລະດົກທີ່ມີຄຸນຄ່າອັນໂດດເດັ່ນສຳລັບທ້ອງຖິ່ນໃດໜຶ່ງ ແລະ ຕັ້ງຢູ່ພື້ນທີ່ຂອງທ້ອງຖິ່ນນັ້ນເຊັ່ນ: ພະບາດໂພນສັນ, ທາດໂພ່ນ.

**ມາດຕາ 18. ລະດັບຊາດ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດລະດັບຊາດ ແມ່ນມໍລະດົກທີ່ມີຄຸນຄ່າອັນໂດດເດັ່ນລະດັບຊາດ ຊຶ່ງຕັ້ງຢູ່ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ທີ່ເປັນມໍລະດົກຂອງວົງຄະນະຍາດແຫ່ງຊາດ ເຊັ່ນ : ພະທາດຫຼວງ, ວັດຊຽງທອງ, ເມືອງວຽງໄຊ, ແບບຟ້ອນລຳວົງ, ນິທານສຽວສະຫວາດ, ສັງສິນໄຊ ແລະ ອື່ນໆ.

**ມາດຕາ19. ລະດັບໂລກ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດລະດັບໂລກ ແມ່ນມໍລະດົກຂອງລາວທີ່ມີຄຸນຄ່າອັນໂດດເດັ່ນລະດັບໂລກ ຊຶ່ງຕັ້ງຢູ່ພື້ນທີ່ໃດໜຶ່ງຂອງ ສປປ ລາວ ໂດຍຮັບຮອງຈາກອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ເຊັ່ນ: ເມືອງຫຼວງພະບາງ, ວັດພູຈຳປາສັກ ແລະ ອື່ນໆ.

## ໝວດທີ 2
## ລະດັບມໍລະດົກແຫ່ງຊາດທາງດ້ານທຳມະຊາດ

**ມາດຕາ 20. ລະດັບມໍລະດົກແຫ່ງຊາດ ທາງດ້ານທຳມະຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ຈັດແບ່ງເປັນ ສີ່ ລະດັບດັ່ງນີ້ :

- ລະດັບທ້ອງຖິ່ນ;
- ລະດັບຊາດ;
- ລະດັບພາກພື້ນ;
- ລະດັບໂລກ.

**ມາດຕາ 21. ລະດັບທ້ອງຖິ່ນ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບທ້ອງຖິ່ນ ແມ່ນມໍລະດົກທີ່ມີຄຸນຄ່າອັນໂດດເດັ່ນທາງດ້ານທັດສະນີຍະພາບ ແລະ ຊີວະນາໆພັນສຳລັບທ້ອງຖິ່ນໃດໜຶ່ງ ແລະ ຕັ້ງຢູ່ພື້ນທີ່ຂອງທ້ອງຖິ່ນນັ້ນ ເຊັ່ນ: ຕາດເລາະ, ຕາດກວາງຊີ.

**ມາດຕາ 22. ລະດັບຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບຊາດ ແມ່ນມໍລະດົກທີ່ມີຄຸນຄ່າອັນໂດດເດັ່ນທາງດ້ານທັດສະນີຍະພາບລະດັບຊາດ ຊຶ່ງຕັ້ງຢູ່ພື້ນທີ່ໃດໜຶ່ງຂອງ ສປປ ລາວ ທີ່ເປັນມໍລະດົກຂອງວົງຄະນະຍາດແຫ່ງຊາດ ເຊັ່ນ: ພູເບັ້ຍ, ຄອນພະເພງ, ປ່າສະຫງວນແຫ່ງຊາດເຊປຽນ, ພູຫີນປູນ, ເຂດອະນຸລັກຊີວະນາໆພັນແຫ່ງຊາດນາກາຍ-ນ້ຳເທີນ, ເຂດຊາກໄດໂນເສົາ ແລະ ອື່ນໆ.

**ມາດຕາ 23. ລະດັບພາກພື້ນ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບພາກພື້ນ ແມ່ນມໍລະດົກແຫ່ງຊາດລາວ ທີ່ມີຄຸນຄ່າອັນໂດດເດັ່ນທາງດ້ານທັດສະນີຍະພາບລະດັບພາກພື້ນ ຊຶ່ງຕັ້ງຢູ່ພື້ນທີ່ໃດໜຶ່ງຂອງ ສປປ ລາວ ໂດຍຮັບຮອງເອົາຈາກອົງການພາກພື້ນທີ່ກ່ຽວຂ້ອງ ເຊັ່ນ: ປ່າສະຫງວນແຫ່ງຊາດ, ບໍ່ນ້ຳຮ້ອນ ແລະ ອື່ນໆ.

### ມາດຕາ 24. ລະດັບໂລກ

ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບໂລກ ແມ່ນມໍລະດົກຂອງລາວ ທີ່ມີຄຸນຄ່າອັນໂດດເດັ່ນທາງດ້ານທັດສະນີຍະພາບລະດັບໂລກ ຊຶ່ງຕັ້ງຢູ່ພື້ນທີ່ໃດໜຶ່ງຂອງ ສປປ ລາວ ໂດຍຮັບຮອງຈາກອົງການສະຫະປະຊາຊາດ ເພື່ອການ ສຶກສາ, ວິທະຍາສາດ ແລະ ວັດທະນະທຳ.

## ໝວດທີ 3
## ສົມບັດມີ່ງເມືອງ

### ມາດຕາ 25. ຄວາມສຳຄັນຂອງສົມບັດມີ່ງເມືອງ

ສົມບັດມີ່ງເມືອງ ປະກອບດ້ວຍມໍລະດົກແຫ່ງຊາດ ທີ່ມີຄຸນຄ່າອັນໂດດເດັ່ນເປັນພິເສດ, ຫາຍາກ ແລະ ເປັນເອກະລັກຂອງຊາດ ຊຶ່ງລັດຕ້ອງໄດ້ເອົາໃຈໃສ່ໃນການປົກປັກຮັກສາ, ອະນຸລັກໃຫ້ໝັ້ນຄົງຢູ່ຄູ່ບ້ານຄູ່ເມືອງ.

### ມາດຕາ 26. ປະເພດສົມບັດມີ່ງເມືອງ

ສົມບັດມີ່ງເມືອງມີທັງສິ່ງທີ່ເປັນວັດຖຸ ຫຼື ບໍ່ເປັນວັດຖຸ, ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບເຊັ່ນ: ພະທາດຫຼວງວຽງຈັນ, ຫໍພະແກ້ວ, ວັດຊຽງທອງ, ພະບາງ, ພື້ນຊຸນບູລົມ, ນິທານສັງສິນໄຊ, ນິທານຊຽງໝ້ຽງ ແລະ ອື່ນໆ.

## ພາກທີ IV
## ລະບຽບການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການອະນຸລັກການບູລະນະ ແລະການປະຕິສັງຂອນມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ

## ໝວດທີ 1
## ລະບຽບການຄຸ້ມຄອງມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ

### ມາດຕາ 27. ລະບຽບການຄຸ້ມຄອງ

ລັດຄຸ້ມຄອງລວມສູນເປັນເອກະພາບຕໍ່ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ໃນຂອບເຂດທົ່ວປະເທດ ນັບທັງຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ໂດຍມີການຂຶ້ນທະບຽນ, ແບ່ງຂັ້ນຄຸ້ມຄອງໃຫ້ຂະແໜງການ ແລະ ທ້ອງຖິ່ນ.

ລັດປົກປ້ອງກຳມະສິດ, ລິຂະສິດ ຕໍ່ມໍລະດົກແຫ່ງຊາດລາວທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ຕົກຢູ່ນອກອະທິປະໄຕຂອງ ສປປ ລາວ ຫຼື ຖືກຕ່າງປະເທດເອົາໄປນຳໃຊ້ເປັນກຳມະສິດ, ລິຂະສິດຂອງຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ.

## ມາດຕາ 28. ການຂຶ້ນທະບຽນ

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ບຸກຄົນ ຫຼື ການຈັດຕັ້ງມີໄວ້ໃນຄອບຄອງຕ້ອງໄດ້ຮັບການຂຶ້ນທະບຽນ.

ລັດດຳເນີນການຊອກຄົ້ນ, ເກັບກຳມໍລະດົກຕ່າງໆ ເພື່ອປະເມີນຄຸນຄ່າ, ຈັດແບ່ງລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນກໍຊຸກຍູ້ໃຫ້ຜູ້ຄອບຄອງມໍລະດົກສະເໜີຂຶ້ນທະບຽນ ຕາມລະບຽບດັ່ງນີ້:

1. ມໍລະດົກແຫ່ງຊາດລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນນຳພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ, ນະຄອນ;
2. ມໍລະດົກແຫ່ງຊາດລະດັບຊາດ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ;
3. ມໍລະດົກແຫ່ງຊາດລະດັບໂລກ ໃຫ້ຂຶ້ນທະບຽນນຳອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ຕາມການສະເໜີຂອງລັດຖະບານ ສປປ ລາວ;
4. ມໍລະດົກແຫ່ງຊາດທີ່ຢູ່ສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ພາກສ່ວນທີ່ກ່ຽວຂ້ອງ;
5. ມໍລະດົກແຫ່ງຊາດທີ່ເປັນສົມບັດມີ່ງເມືອງ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

ພາຍຫຼັງຂຶ້ນທະບຽນແລ້ວ ລັດຈະຮັບຮູ້ມໍລະດົກດັ່ງກ່າວເປັນມໍລະດົກແຫ່ງຊາດ ພ້ອມທັງຮັບຮູ້ສິດຄອບຄອງຂອງເຈົ້າຂອງມໍລະດົກ.

ຖ້າຫາກມໍລະດົກນັ້ນບໍ່ໄດ້ຂຶ້ນທະບຽນ ເຈົ້າຂອງມໍລະດົກຈະບໍ່ມີສິດດຳເນີນກິດຈະກຳຕ່າງໆກ່ຽວກັບມໍລະດົກດັ່ງກ່າວ ເຊັ່ນ: ການວາງສະແດງ, ການຈຳລອງແບບ ແລະ ອື່ນໆ.

ມໍລະດົກແຫ່ງຊາດລະດັບຊາດທີ່ມີຄຸນຄ່າສູງ, ຫາຍາກ ແລະ ເປັນເອກະລັກຂອງຊາດ ຕ້ອງໄດ້ຄົ້ນຄວ້າ ແລະ ສະເໜີຈົດທະບຽນກຳມະສິດ ແລະ ລິຂະສິດຂອງຊາດຕໍ່ສາກົນ.

## ມາດຕາ 29. ການສ້ອມແປງ, ບູລະນະ ແລະປະຕິສັງຂອນ

ລັດສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນໃນການສ້ອມແປງ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ.

ການສ້ອມແປງ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກການຈັດຕັ້ງບ່ອນທີ່ຕົນຂຶ້ນທະບຽນ.

**ມາດຕາ 30. ການຈຳລອງແບບ**

ການຈຳລອງແບບ ແມ່ນການສ້າງວັດຖຸໃໝ່ຂຶ້ນ ໂດຍການກ່າຍເອົາແບບ, ສີສັນ, ລວດລາຍຂອງມໍລະດົກດັ້ງເດີມ.

ການຈຳລອງແບບມໍລະດົກແຫ່ງຊາດ ທີ່ເປັນສົມບັດມິ່ງເມືອງ ແລະ ມໍລະດົກແຫ່ງຊາດລະດັບຊາດຕ້ອງຂໍອະນຸຍາດຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ. ສຳລັບມໍລະດົກແຫ່ງຊາດລະດັບທ້ອງຖິ່ນແມ່ນພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ, ນະຄອນ ເປັນຜູ້ອະນຸມັດ.

**ມາດຕາ 31. ການສ້າງໃໝ່**

ບຸກຄົນ ແລະການຈັດຕັ້ງ ທີ່ມີຈຸດປະສົງຢາກສ້າງອະນຸສາວະລີ, ປັ້ນຫຼໍ່ຮູບບັນພະບຸລຸດ, ຜູ້ນຳ, ວິລະຊົນແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

ສຳລັບການສ້າງສາດສະນະສະຖານ ຕອ້ງໄດ້ຮັບອະນຸຍາດຈາກເຈົ້າແຂວງ, ເຈົ້າຄອງນະຄອນ ໂດຍປະສານກັບອົງການອື່ນທີ່ກ່ຽວຂ້ອງ.

ສຳລັບການປັ້ນຫຼໍ່ພະພຸດທະຮູບ, ການປັ້ນຫຼໍ່ຮູບອະນຸສອນຂອງຕະກູນສ່ວນບຸກຄົນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ.

**ມາດຕາ 32. ການວາງສະແດງ**

ການວາງສະແດງມໍລະດົກແຫ່ງຊາດມີ ສາມປະເພດຕົ້ນຕໍດັ່ງນີ້ :

- ການວາງສະແດງ ເພື່ອເຜີຍແຜ່ໃຫ້ມວນຊົນເຂົ້າຊົມ;
- ການວາງສະແດງ ໂດຍມີການປະກອບສ່ວນໃນການປົກປັກຮັກສາ ແລະບູລະນະ;
- ການວາງສະແດງ ເພື່ອການຄ້າ;

ການວາງສະແດງມໍລະດົກແຫ່ງຊາດ ອາດຈະດຳເນີນຢູ່ພາຍໃນ ຫຼື ຢູ່ຕ່າງປະເທດ.

ການວາງສະແດງມໍລະດົກແຫ່ງຊາດຢູ່ພາຍໃນປະເທດ ຕ້ອງໄດ້ຮັບການອະນຸຍາດຈາກຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ ພາຍຫຼັງປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບການວາງສະແດງມໍລະດົກແຫ່ງຊາດຢູ່ຕ່າງປະເທດນັ້ນ ຕ້ອງໄດ້ຮັບການອະນຸຍາດຈາກລັດຖະບານ ໂດຍການສະເໜີຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

**ມາດຕາ 33. ການພົບເຫັນ ແລະ ການພົບພໍ້**

ບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການໃດໜຶ່ງ ຫາກໄດ້ພົບເຫັນມໍລະດົກແຫ່ງຊາດ ຕ້ອງລາຍງານໃຫ້ອົງການປົກຄອງຢູ່ທ້ອງຖິ່ນ ແລະ ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳທີ່ກ່ຽວຂ້ອງໃນທັນໃດ ພ້ອມທັງໂຈະກິດຈະການນັ້ນ ຈົນກວ່າຈະໄດ້ຮັບອະນຸຍາດໃຫ້ສືບຕໍ່.

ບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ພົບພໍ້ສະຖານທີ່ ຫຼື ໄດ້ຮັບຂໍ້ມູນກ່ຽວກັບສະຖານທີ່ທີ່ມີ ຫຼື ສົງໄສວ່າມີມໍລະດົກແຫ່ງຊາດ, ເຄື່ອງຄ້ຳຂອງຄູນ ຕ້ອງລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳຊາບໃນທັນໃດ ແລະ ຫ້າມບໍ່ໃຫ້ຂຸດຄົ້ນກ່ອນໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ.

**ມາດຕາ 34. ການຄົ້ນຄວ້າວິໄຈ**

ລັດສົ່ງເສີມໃຫ້ບຸກຄົນ ຫຼື ການຈັດຕັ້ງຢູ່ພາຍໃນ ຫຼື ຕ່າງປະເທດ ດຳເນີນການຄົ້ນຄວ້າວິໄຈກ່ຽວກັບມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ດ້ວຍນະໂຍບາຍຕ່າງໆ.

ການຄົ້ນຄວ້າວິໄຈກ່ຽວກັບມໍລະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ; ສຳລັບບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງຮ່ວມມືກັບຕ່າງປະເທດ ໃນການຄົ້ນຄວ້າວິໄຈກ່ຽວກັບມໍລະດົກແຫ່ງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງ ຂ່າວ ແລະ ວັດທະນະທຳ ພາຍຫຼັງປະສານສົມທົບກັບກະຊວງການຕ່າງປະເທດແລ້ວ.

ຂໍ້ມູນ ແລະ ຜົນຂອງການຄົ້ນຄວ້າວິໄຈນັ້ນ ຕ້ອງມອບຕົ້ນສະບັບໃຫ້ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ ເພື່ອເກັບຮັກສາໄວ້ ແລະ ໂຄສະນາເຜີຍແຜ່ຕາມລະບຽບການ.

**ມາດຕາ 35. ການສົ່ງອອກນອກປະເທດເພື່ອການວິໄຈ**

ການສົ່ງສິ້ນສ່ວນ ຫຼື ວັດຖຸທີ່ເປັນມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງມີຄຸນຄ່າສູງອອກນອກປະເທດເພື່ອການວິໄຈ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ. ສຳລັບສິ້ນສ່ວນ ຫຼື ວັດຖຸມໍລະດົກແຫ່ງຊາດອື່ນນັ້ນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

**ມາດຕາ 36. ການນຳເຂົ້າ, ເຜີຍແຜ່ ຫຼື ຈຳໜ່າຍ**

ການນຳເຂົ້າ, ເຜີຍແຜ່ ຫຼື ຈຳໜ່າຍຜະລິດຕະພັນວັດທະນະທຳຂອງຕ່າງປະເທດ ຕ້ອງໄດ້ຮັບການກວດກາ ແລະ ອະນຸຍາດຈາກຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ.

ຜະລິດຕະພັນວັດທະນະທຳຂອງຕ່າງປະເທດ ທີ່ເປັນວັດຖຸ ໂດຍສະເພາະພະພຸດທະຮູບ ຫຼື ບໍ່ເປັນວັດຖຸທີ່ບໍ່ສອດຄ່ອງກັບວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດລາວ ຈະບໍ່ອະນຸຍາດໃຫ້ນຳເຂົ້າ, ເຜີຍແຜ່ ຫຼືຈຳໜ່າຍ.

**ມາດຕາ 37. ການໂອນ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະປະຫວັດສາດທີ່ໄດ້ຂຶ້ນທະບຽນແລ້ວ ສາມາດໂອນກຳມະສິດ, ລິຂະສິດໃຫ້ຜູ້ອື່ນໄດ້, ແຕ່ຜູ້ທີ່ໄດ້ຮັບໂອນນັ້ນ ຕ້ອງໄດ້ແຈ້ງໃຫ້ຂະແໜງການຖະແຫຼງຂ່າວ ແລະວັດທະນະທຳ ບ່ອນທີ່ຕົນຂຶ້ນທະບຽນຮັບຊາບ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໂອນເປັນຕົ້ນໄປ.

**ມາດຕາ 38. ການຊື້-ຂາຍ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຊື້-ຂາຍວັດຖຸທີ່ເປັນມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ ແລະວັດທະນະທຳ. ໃນກໍລະນີວັດຖຸທີ່ເປັນມໍລະດົກແຫ່ງຊາດນັ້ນ ຫາກມີຄຸນຄ່າສູງ, ໂດດເດັ່ນ ລັດມີບູລິມະສິດຊື້ເອົາວັດຖຸດັ່ງກ່າວຕາມລາຄາທີ່ຕົກລົງກັນ.

ລັດບໍ່ອະນຸຍາດໃຫ້ຊື້-ຂາຍ ມໍລະດົກແຫ່ງຊາດອອກນອກປະເທດ. ສຳລັບການແລກປ່ຽນລະຫວ່າງຊາດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

**ມາດຕາ 39. ການສືບທອດ**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ທີ່ໄດ້ຂຶ້ນທະບຽນແລ້ວສາມາດສືບທອດເປັນມູນມໍລະດົກໄດ້, ແຕ່ຜູ້ທີ່ໄດ້ຮັບການສືບທອດຕ້ອງໄດ້ແຈ້ງໃຫ້ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ ບ່ອນທີ່ຕົນຂຶ້ນທະບຽນນັ້ນຮັບຊາບ ພາຍໃນກຳນົດຫົກສິບວັນ ນັບແຕ່ວັນໄດ້ຮັບການສືບທອດເປັນຕົ້ນໄປ. ໃນກໍລະນີທີ່ມີຫຼາຍຄົນໄດ້ຮັບການສືບທອດນຳກັນນັ້ນ ຈະມອບສັນທະເປັນລາຍລັກອັກສອນໃຫ້ຜູ້ໃດຜູ້ໜຶ່ງເປັນຜູ້ຕາງໜ້າໄປແຈ້ງກໍໄດ້.

## ໝວດທີ 2
## ລະບຽບການນຳໃຊ້ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ

**ມາດຕາ 40. ຈຸດປະສົງການນຳໃຊ້**

ການນຳໃຊ້ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ແມ່ນເພື່ອຈຸດປະສົງດັ່ງນີ້ :

1. ໃຫ້ເປັນພື້ນຖານແຫ່ງການຢືນຢົງຄົງຕົວຂອງຊາດ, ເປັນກຳລັງດັນໃຫ້ສັງຄົມຂະຫຍາຍຕົວ ທັງແມ່ນຈຸດໝາຍຂອງການພັດທະນາປະເທດຊາດໃຫ້ຮັ່ງມີ, ເຂັ້ມແຂງ;
2. ສຶກສາອົບຮົມພົນລະເມືອງໃຫ້ມີນ້ຳໃຈຮັກຊາດ, ມີຄວາມເອກອ້າງທະນົງໃຈຕໍ່ມູນເຊື້ອຂະຫຍັນໝັ່ນພຽນ, ປະດິດສ້າງ, ຕໍ່ສູ້ພິລະອາດຫານ, ສາມັກຄີເປັນປຶກແຜ່ນຂອງປະຊາຊົນລາວບັນດາເຜົ່າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
3. ເພີ່ມທະວີຄັງສາງມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ໃຫ້ອຸດົມຮັ່ງມີຂຶ້ນ;
4. ສົ່ງເສີມອຸດສາຫະກຳການທ່ອງທ່ຽວ;

5. ເຊື່ອມໂຍງເຂົ້າກັບການເຄື່ອນໄຫວອະນຸລັກ, ເສີມຂະຫຍາຍຄຸນຄ່າມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດຂອງໂລກ;
6. ຄົ້ນຄວ້າວິໄຈທາງດ້ານບູຮານວິທະຍາ, ປະຫວັດສາດ ແລະ ອື່ນໆ.

### ມາດຕາ 41. ລະບຽບການນຳໃຊ້

ການນຳໃຊ້ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ໃຫ້ປະຕິບັດດັ່ງນີ້ :

1. ນຳໃຊ້ໃຫ້ຖືກຕ້ອງຕາມຈຸດປະສົງ, ມີປະສິດທິຜົນ ແລະ ຍືນຍົງ;
2. ບໍ່ອະນຸຍາດໃຫ້ນຳໃຊ້ເຂດມໍລະດົກແຫ່ງຊາດ, ມໍລະດົກສະຖານ, ສະຖານທີ່ປະຫວັດສາດ ເຂົ້າໃນເປົ້າໝາຍໃດໜຶ່ງທີ່ຈະພາໃຫ້ສະຖານະພາບເດີມນັ້ນປ່ຽນແປງ;
3. ນຳໃຊ້ລາຍຮັບທີ່ໄດ້ມາຈາກມໍລະດົກແຫ່ງຊາດ ດ້ວຍອັດຕາສ່ວນທີ່ເໝາະສົມເຂົ້າໃນການພັດທະນາມໍລະດົກດັ່ງກ່າວ.

## ໝວດທີ 3
## ລະບຽບການປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດ

### ມາດຕາ 42. ການປົກປັກຮັກສາ, ອະນຸລັກມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດທີ່ເປັນວັດຖຸ

ການປົກປັກຮັກສາ, ອະນຸລັກມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດທີ່ເປັນວັດຖຸຕ້ອງປະຕິບັດ ດັ່ງນີ້ :

1. ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມຮັບຜິດຊອບກ່ຽວກັບມໍລະດົກແຫ່ງຊາດ ຕ້ອງຄາດຄະເນຜົນເສຍຫາຍທີ່ຈະເກີດຂຶ້ນແກ່ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ພ້ອມທັງມີມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ;
2. ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະການພັດທະນາອຸດສາຫະກຳ, ກະສິກຳ, ພື້ນຖານໂຄງລ່າງໃນເຂດທີ່ມີ ຫຼື ສົງໄສວ່າມີມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດນັ້ນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ພ້ອມທັງມີມາດຕະການ ເພື່ອປົກປັກຮັກສາມໍລະດົກດັ່ງກ່າວບໍ່ໃຫ້ເສຍຫາຍ;
3. ຫ້າມບຸກຄົນ ຫຼື ການຈັດຕັ້ງ ກໍ່ຄວາມເສຍຫາຍແກ່ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດເຊັ່ນ : ການທຳລາຍພະພຸດທະຮູບ, ບູຮານສະຖານ, ປູສະນີຍະຖານ, ສະຖານທີ່ປະຫວັດສາດການບຸກຍຶດ, ການຈັບຈອງທີ່ດິນເຂດອະ

ບຸລັກມໍລະດົກແຫ່ງຊາດ, ການປ່ຽນແປງສະຖານະພາບເດີມຂອງມໍລະດົກ ໄປສູ່ສະຖານະພາບອື່ນ, ການບິດເບືອນເນື້ອໃນປະຫວັດສາດ.

ບໍ່ອະນຸຍາດໃຫ້ບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ສຳປະທານມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດລະດັບຊາດ ເວັ້ນເສຍແຕ່ມີຄວາມຈຳເປັນ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

**ມາດຕາ 43. ເຂດປົກປັກຮັກສາມໍລະດົກສະຖານ**

ເຂດປົກປັກຮັກສາມໍລະດົກສະຖານ ໂດຍທົ່ວໄປແລ້ວແບ່ງອອກເປັນສາມເຂດ ດັ່ງນີ້ :

- ເຂດ 1 ແມ່ນເຂດໃຈກາງ ເປັນສະຖານທີ່ຕັ້ງຂອງມໍລະດົກ ຊຶ່ງຕ້ອງຮັກສາສະພາບເດີມໄວ້ ແລະ ບໍ່ໃຫ້ມີການປຸກສ້າງ ;
- ເຂດ 2 ແມ່ນເຂດອ້ອມຮອບເຂດໃຈກາງ ຊຶ່ງອະນຸຍາດໃຫ້ດຳເນີນກິດຈະກຳຈຳນວນໜຶ່ງ ເພື່ອສົ່ງເສີມຄຸນຄ່າຂອງເຂດໜຶ່ງ ແຕ່ບໍ່ໃຫ້ກໍ່ຄວາມເສຍຫາຍຕໍ່ສະພາບແວດລ້ອມຂອງເຂດນັ້ນ;
- ເຂດ 3 ແມ່ນເຂດຄຸ້ມຄອງ ຊຶ່ງອະນຸຍາດໃຫ້ມີການປຸກສ້າງ ເພື່ອຮັບໃຊ້ໃຫ້ແກ່ເຂດ 1 ແລະເຂດ 2 ເພື່ອຮອງຮັບການທ່ອງທ່ຽວ.

ສຳລັບການກຳນົດເຂດລະອຽດນັ້ນ ມີລະບຽບການສະເພາະ.

**ມາດຕາ 44. ມາດຕະການປົກປັກຮັກສາເຂດມໍລະດົກສະຖານ**

ຜູ້ມີໜ້າທີ່ຮັບຜິດຊອບຕ້ອງໄດ້ເອົາໃຈໃສ່ຕິດຕາມກວດກາ ໃນກໍລະນີທີ່ເຫັນວ່າມໍລະດົກແຫ່ງຊາດຖືກບຸກລຸກ, ທຳລາຍ ຫຼື ເສຍຫາຍຈາກການກະທຳຂອງຄົນ ຫຼື ຈາກທຳມະຊາດ ຕ້ອງມີມາດຕະການສະກັດກັ້ນຢ່າງທັນການ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນມໍລະດົກສະຖານຕັ້ງຢູ່ ແລ້ວແຈ້ງໃຫ້ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳຊາບ ເພື່ອມີມາດຕະການແກ້ໄຂຢ່າງທັນການ.

**ມາດຕາ 45. ການດຳເນີນການສ້ອມແປງ, ບູລະນະ ແລະ ປະຕິສັງຂອນ**

ໃນການສ້ອມແປງ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະປະຫວັດສາດ ໃຫ້ປະຕິບັດດັ່ງນີ້ :

1. ຕ້ອງແມ່ນວິສາຫະກິດສະເພາະ ຫຼື ວິສາຫະກິດທີ່ມີເງື່ອນໄຂໃນການສ້ອມແປງ, ບູລະນະ ແລະ ປະຕິສັງຂອນ ມໍລະດົກແຫ່ງຊາດ ທາງດ້ານວັດທະນະທຳ ແລະ ປະຫວັດສາດທີ່ໄດ້ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ;
2. ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງມໍລະດົກແຫ່ງຊາດ ບ່ອນມໍລະດົກແຫ່ງຊາດນັ້ນຂຶ້ນທະບຽນນຳ. ສຳລັບມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະ

ທວັດສາດລະດັບຊາດ ແລະ ລະດັບໂລກ ຕ້ອງໄດ້ຂໍອະນຸຍາດນຳກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ;

3. ຕ້ອງຮັກສາຄຸນລັກສະນະເດີມຂອງມໍລະດົກນັ້ນໄວ້.

**ມາດຕາ 46. ການປົກປັກຮັກສາ ແລະ ອະນຸລັກມໍລະດົກແຫ່ງຊາດທີ່ບໍ່ເປັນວັດຖຸ**

ການປົກປັກຮັກສາ ແລະ ອະນຸລັກມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດທີ່ບໍ່ເປັນວັດຖຸ ຕ້ອງປະຕິບັດດັ່ງນີ້:

- ການປົກປັກຮັກສາ ແລະ ການອະນຸລັກມໍລະດົກແຫ່ງຊາດທາງດ້ານວັດທະນະທຳ ແລະ ປະຫວັດສາດ ຕ້ອງໄປຄຽງຄູ່ກັບການສົ່ງເສີມ, ເຜີຍແຜ່ ແລະ ນຳໃຊ້ຢ່າງກວ້າງຂວາງຕໍ່ພາຍໃນ ແລະ ຕ່າງປະເທດ;
- ການຄົ້ນຄວ້າ, ປະດິດແຕ່ງ ຕ້ອງຮັບປະກັນລັກສະນະຊາດ, ມະຫາຊົນແລະກ້າວໜ້າ;
- ຊາວຕ່າງດ້າວ, ຄົນຕ່າງປະເທດ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວ, ອົງການຈັດຕັ້ງສາກົນທີ່ຈະດຳເນີນການຄົ້ນຄວ້າ, ວິໄຈມໍລະດົກແຫ່ງຊາດ ຕ້ອງໃຫ້ສອດຄ່ອງກັບເນື້ອໃນຄວາມເປັນຈິງຂອງມໍລະດົກນັ້ນ ແລະ ໄດ້ຮັບອະນຸຍາດ ຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ;
- ບໍ່ໃຫ້ຈົດກ່າຍ, ລອກແບບ ເອົາຜົນງານການຄົ້ນຄວ້າ, ປະດິດແຕ່ງຂອງຜູ້ອື່ນ ກ່ຽວກັບມໍລະດົກແຫ່ງຊາດມາເປັນລິຂະສິດຂອງຕົນ ຫຼື ພິມເຜີຍແຜ່ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ ແລະ ພາກສ່ວນກ່ຽວຂ້ອງ;
- ບໍ່ໃຫ້ເຜີຍແຜ່ມໍລະດົກແຫ່ງຊາດ ທີ່ເປັນຄວາມລັບຂອງຊາດ.

## ພາກທີ V
## ລະບຽບການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການອະນຸລັກ ແລະ ການບູລະນະມໍລະດົກແຫ່ງຊາດທາງດ້ານທຳມະຊາດ

### ໝວດທີ 1
### ລະບຽບການຄຸ້ມຄອງມໍລະດົກແຫ່ງຊາດທາງດ້ານທຳມະຊາດ

**ມາດຕາ 47. ລະບຽບການຄຸ້ມຄອງມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ລັດຄຸ້ມຄອງລວມສູນເປັນເອກະພາບ ຕໍ່ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ໃນຂອບເຂດທົ່ວປະເທດໂດຍມີການຂຶ້ນທະບຽນ, ແບ່ງຂັ້ນຄຸ້ມຄອງໃຫ້ຂະແໜງການຕ່າງໆ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

ລັດປົກປ້ອງກຳມະສິດ, ລິຂະສິດຂອງຕົນຕໍ່ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ທີ່ຕົກຢູ່ນອກອະທິປະໄຕຂອງ ສປປ ລາວ ຫຼື ຖືກຕ່າງປະເທດເອົາໄປເປັນກຳມະສິດ, ລິຂະສິດຂອງຕົນໂດຍບໍ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 48. ການຂຶ້ນທະບຽນມໍລະດົກແຫ່ງຊາດທາງດ້ານທຳມະຊາດ**

ມໍລະດົກແຫ່ງຊາດທາງດ້ານທຳມະຊາດຕ້ອງໄດ້ຂຶ້ນທະບຽນ ເປັນຕົ້ນແມ່ນ ພື້ນທີ່ມໍລະດົກ ແລະສິ່ງທີ່ມີຄຸນຄ່າສູງ, ໂດດເດັ່ນ ເຊັ່ນ: ເຂດປົກປັກຮັກສາຊີວະນາໆພັນ, ປ່າສະຫງວນ, ເຂດດິນບໍລິເວນນ້ຳ, ຖ້ຳທີ່ມີຄຸນຄ່າທາງດ້ານທຳມະຊາດ ຕາມລະບຽບດັ່ງນີ້:

1. ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບທ້ອງຖິ່ນ ໃຫ້ຂຶ້ນທະບຽນນຳພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
2. ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບຊາດໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບພາກພື້ນ ໃຫ້ຂຶ້ນທະບຽນນຳອົງການພາກພື້ນທີ່ກ່ຽວຂ້ອງ ໂດຍລັດຖະບານເປັນຜູ້ສະເໜີ;
4. ມໍລະດົກແຫ່ງຊາດທາງດ້ານທຳມະຊາດລະດັບໂລກ ໃຫ້ຂຶ້ນທະບຽນນຳອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ໂດຍລັດຖະບານເປັນຜູ້ສະເໜີ.

**ມາດຕາ 49. ລະບຽບການຄຸ້ມຄອງແຫຼ່ງຊີວະນາໆພັນ**

ແຫຼ່ງຊີວະນາໆພັນຊຶ່ງເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດເຊັ່ນ: ທາມ, ບຶງ, ປຸ່ງ. ຕ້ອງໄດ້ມີການຄຸ້ມຄອງດ້ວຍການກວດກາ, ຂຶ້ນທະບຽນ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 50. ລະບຽບການຄຸ້ມຄອງປ່າສະຫງວນ**

ປ່າສະຫງວນທີ່ໄດ້ຂຶ້ນທະບຽນເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດແລ້ວນັ້ນ ຕ້ອງມີການຄຸ້ມຄອງ ເພື່ອຈຸດປະສົງໃນການປົກປັກຮັກສາທຳມະຊາດໃຫ້ຍືນຍົງ ແລະ ອຸດົມສົມບູນ.

**ມາດຕາ 51. ລະບຽບການຄຸ້ມຄອງສວນອຸດທິຍານ**

ສວນອຸດທິຍານທຳມະຊາດຊຶ່ງອຸດົມຮັ່ງມີໄປດ້ວຍລະບົບນິເວດ, ສະອາດສວຍງາມເປັນໜ້າປະທັບໃຈ ທີ່ກາຍເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດນັ້ນ ຕ້ອງມີການຄຸ້ມຄອງເພື່ອໃຫ້ເປັນສະຖານທີ່ພັກຜ່ອນ ແລະ ທ່ອງທ່ຽວຂອງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 52. ລະບຽບການຄຸ້ມຄອງເຂດທິວທັດທຳມະຊາດ**

ເຂດທິວທັດທຳມະຊາດ ຊຶ່ງມີຄຸນຄ່າທາງດ້ານທັດສະນີຍະພາບອັນສວຍສົດງົດງາມ ແລະໂດດເດັ່ນ ທີ່ມີ ພູ, ຜາ, ປ່າໄມ້, ແມ່ນ້ຳ, ລຳເຊ, ນ້ຳຕົກຕາດ ແລະ ອື່ນໆ ຕ້ອງຂຶ້ນທະບຽນເປັນມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແລະ ຕ້ອງມີການຄຸ້ມຄອງ ເພື່ອຈຸດປະສົງຮັກສາຄວາມສວຍງາມຂອງທຳມະຊາດໃຫ້ຍືນຍົງ.

ສຳລັບການຄຸ້ມຄອງມໍລະດົກທາງດ້ານທຳມະຊາດ ທີ່ໄດ້ກຳນົດໄວ້ໃນມາດຕາ 49 ຫາ 52 ນັ້ນ ຈະມີລະບຽບການສະເພາະກຳນົດໄວ້ຕ່າງຫາກ.

## ໝວດທີ 2
## ລະບຽບການນຳໃຊ້, ການປົກປັກຮັກສາ, ການອະນຸລັກ ແລະການບູລະນະ ມໍລະດົກແຫ່ງຊາດທາງດ້ານທຳມະຊາດ

### ມາດຕາ 53. ຈຸດປະສົງ ແລະລະບຽບການນຳໃຊ້

ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແມ່ນນຳໃຊ້ເພື່ອ:

1. ເປັນພື້ນຖານແຫ່ງການຍືນຍົງຄົງຕົວຂອງຊາດ, ເປັນບ່ອນອີງ ແລະ ທ່າແຮງຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ສ້າງຈິດສຳນຶກໃຫ້ພົນລະເມືອງ ມີນ້ຳໃຈຮັກສິ່ງແວດລ້ອມທຳມະຊາດ ເປັນຕົ້ນ ແມ່ນປ່າໄມ້, ແຫຼ່ງນ້ຳ ແລະ ຊີວະນາໆພັນ;
3. ສົ່ງເສີມອຸດສາຫະກຳການທ່ອງທ່ຽວ;
4. ເຊື່ອມໂຍງເຂົ້າກັບການເຄື່ອນໄຫວອະນຸລັກ, ເສີມຂະຫຍາຍຄຸນຄ່າມໍລະດົກແຫ່ງຊາດ ທາງດ້ານທຳມະຊາດຂອງພາກພື້ນ ແລະ ຂອງໂລກ;
5. ຄົ້ນຄວ້າວິໄຈທາງດ້ານສິ່ງແວດລ້ອມ, ຊີວະນາໆພັນ ແລະ ອື່ນໆ;
6. ເພີ່ມທະວີຄັງສາງມໍລະດົກແຫ່ງຊາດທາງດ້ານທຳມະຊາດ ໃຫ້ມີຄວາມອຸດົມຮັ່ງມີຂຶ້ນ.

ການນຳໃຊ້ມໍລະດົກແຫ່ງຊາດທາງດ້ານທຳມະຊາດຕ້ອງ:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ;
2. ມີປະສິດທິຜົນ, ຍືນຍົງ ແລະ ບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດຫຼື ສັງຄົມ;
3. ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 54. ລະບຽບການປົກປັກຮັກສາ ແລະ ອະນຸລັກມໍລະດົກແຫ່ງຊາດທາງດ້ານທຳມະຊາດ

ການປົກປັກຮັກສາ ແລະ ອະນຸລັກມໍລະດົກແຫ່ງຊາດທາງດ້ານທຳມະຊາດ ຕ້ອງປະຕິບັດດັ່ງນີ້ :

1. ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງພັດທະນາເສດຖະກິດ-ສັງຄົມ ໃນເຂດມໍລະດົກແຫ່ງຊາດທາງດ້ານທຳມະຊາດ ໂດຍສະເພາະການພັດທະນາອຸດສາຫະກຳ, ກະສິກຳ, ພື້ນຖານໂຄງລ່າງ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
2. ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມຮັບຜິດຊອບກ່ຽວກັບມໍລະດົກແຫ່ງຊາດທາງດ້ານທຳມະຊາດ ຕ້ອງຄາດຄະເນຜົນເສຍຫາຍທີ່ຈະເກີດຂຶ້ນແກ່ມໍລະດົກດັ່ງກ່າວ ພ້ອມທັງມີມາດຕະການສະກັດກັ້ນ, ແກ້ໄຂຢ່າງເໝາະສົມ ແລະ ທັນການ;

3. ມໍລະດົກແຫ່ງຊາດທາງດ້ານທຳມະຊາດ ຕ້ອງໄດ້ຮັບການປົກປັກຮັກສາໄວ້ຊຶ່ງຄວາມສວຍງາມຂອງທັດສະນີຍະພາບ ແລະ ຄວາມອຸດົມສົມບູນທາງຊີວະນາໆພັນ;
4. ຫ້າມບຸກຄົນ ຫຼື ການຈັດຕັ້ງ ກໍ່ຄວາມເສຍຫາຍແກ່ມໍລະດົກແຫ່ງຊາດທາງດ້ານທຳມະຊາດເຊັ່ນ: ການທຳລາຍປ່າໄມ້ ຫຼື ຂຸດຄົ້ນຊັບພະຍາກອນທຳມະຊາດຢູ່ໜ້າດິນ, ໃຕ້ດິນໃນເຂດມໍລະດົກແຫ່ງຊາດ, ການບຸກຍຶດ, ການຈັບຈອງທີ່ດິນເຂດປົກປັກຮັກສາຊີວະນາໆພັນ, ເຂດປ່າສະຫງວນ, ສວນອຸດທິຍານ ແລະ ເຂດທິວທັດທຳມະຊາດ ລວມທັງການປ່ຽນແປງສະຖານະພາບເດີມຂອງມໍລະດົກແຫ່ງຊາດ.

**ມາດຕາ 55. ລະບຽບການບູລະນະຟື້ນຟູ**

ການບູລະນະຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ ໃຫ້ປະຕິບັດດັ່ງນີ້ :

1. ຕ້ອງແມ່ນວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂໃນການບູລະນະຟື້ນຟູມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແລະ ໄດ້ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ;
2. ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງມໍລະດົກແຫ່ງຊາດ ບ່ອນທີ່ມໍລະດົກນັ້ນໄດ້ຂຶ້ນທະບຽນ. ສຳລັບມໍລະດົກແຫ່ງຊາດລະດັບພາກພື້ນ ແລະ ລະດັບໂລກ ຕ້ອງໄດ້ຂໍອະນຸຍາດຈາກກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ຕ້ອງຮັກສາຄຸນລັກສະນະເດີມຂອງມໍລະດົກນັ້ນ;
4. ຕ້ອງແນໃສ່ປົວແປງມໍລະດົກແຫ່ງຊາດທາງດ້ານທຳມະຊາດທີ່ຊຸດໂຊມ, ເສຍຫາຍ ຫຼື ຖືກທຳລາຍໃຫ້ຄືນສູ່ສະພາບເດີມ.

**ມາດຕາ 56. ເປົ້າໝາຍຂອງການພັດທະນາ**

ການພັດທະນາມໍລະດົກແຫ່ງຊາດທາງດ້ານທຳມະຊາດ ແນໃສ່ເຮັດໃຫ້ມໍລະດົກນັ້ນຍືນຍົງ, ອຸດົມສົມບູນ ແລະ ຮັ່ງມີຂຶ້ນ ເພື່ອເປັນບ່ອນອີງໃຫ້ແກ່ການພັດທະນາເສດຖະກິດແຫ່ງຊາດ, ສຶກສາຄົ້ນຄວ້າ, ຊອກຮູ້ຄຸນຄ່າອັນຍອດຍິ່ງຂອງມໍລະດົກດັ່ງກ່າວ ພ້ອມທັງເສີມຂະຫຍາຍທ່າແຮງຂອງມໍລະດົກນັ້ນ ເຂົ້າໃນວຽກງານປົກປັກຮັກສາສິ່ງແວດລ້ອມ, ການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

## ພາກທີ VI
## ທໍາພິພິດທະພັນ

**ມາດຕາ 57. ປະເພດຫໍພິພິດທະພັນ**

ຫໍພິພິດທະພັນແບ່ງອອກເປັນ ສາມປະເພດ ດັ່ງນີ້ :

- ຫໍພິພິດທະພັນຂອງລັດ;
- ຫໍພິພິດທະພັນລວມໝູ່;

- ຫໍພິພິດທະພັນເອກະຊົນ.

**ມາດຕາ 58. ຄວາມໝາຍຂອງຫໍພິພິດທະພັນ**

1. ຫໍພິພິດທະພັນຂອງລັດ ແມ່ນສະຖານທີ່ສະສົມ, ວາງສະແດງ, ອະນຸລັກຮັກສາວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນຂອງລັດ ຊຶ່ງປະກອບດ້ວຍ:
   - ຫໍພິພິດທະພັນແຫ່ງຊາດ ຊຶ່ງແມ່ນສະຖານທີ່ສະສົມ, ວາງສະແດງ, ອະນຸລັກຮັກສາວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນ ໃນຂອບເຂດທົ່ວປະເທດ;
   - ຫໍພິພິດທະພັນຂະແໜງການ ຊຶ່ງແມ່ນສະຖານທີ່ສະສົມ, ວາງສະແດງ, ອະນຸລັກຮັກສາວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນກ່ຽວກັບຂະແໜງການ;
   - ຫໍພິພິດທະພັນລະດັບທ້ອງຖິ່ນ ຊຶ່ງແມ່ນສະຖານທີ່ສະສົມ, ວາງສະແດງ, ອະນຸລັກຮັກສາວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນ ຢູ່ທ້ອງຖິ່ນ.
2. ຫໍພິພິດທະພັນລວມໝູ່ ແມ່ນສະຖານທີ່ສະສົມ, ວາງສະແດງ, ອະນຸລັກຮັກສາວັດຖຸພັນທີ່ມີຄຸນຄ່າສູງ, ໂດດເດັ່ນ ຂອງລວມໝູ່ຢູ່ເຂດນັ້ນ;
3. ຫໍພິພິດທະພັນເອກະຊົນ ແມ່ນສະຖານທີ່ສະສົມ, ວາງສະແດງ, ອະນຸລັກວັດຖຸພັນຂອງສ່ວນບຸກຄົນ.

**ມາດຕາ 59. ລະບຽບການສ້າງຫໍພິພິດທະພັນ**

ການສ້າງຫໍພິພິດທະພັນ ຕ້ອງມີເງື່ອນໄຂດັ່ງນີ້:

- ມີການສະສົມວັດຖຸທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ, ທຳມະຊາດ, ວິທະຍາສາດ, ເຕັກໂນໂລຊີ ໃນຈຳນວນທີ່ເໝາະສົມ ເພື່ອວາງສະແດງ;
- ມີສະຖານທີ່ວາງສະແດງ ແລະ ສາງເກັບມ້ຽນທີ່ຮັບປະກັນ;
- ມີນັກວິຊາການທີ່ມີຄວາມຮູ້ກ່ຽວກັບມໍລະດົກແຫ່ງຊາດ ຕາມລະບຽບການ.

ການສ້າງຫໍພິພິດທະພັນ ຕ້ອງໄດ້ຮັບອະນຸຍາດຕາມກໍລະນີດັ່ງນີ້:

- ຫໍພິພິດທະພັນແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຈາກປະທານປະເທດ ໂດຍແມ່ນລັດຖະບານເປັນຜູ້ສະເໜີ;
- ຫໍພິພິດທະພັນຂະແໜງການ ແລະ ລະດັບທ້ອງຖິ່ນ ຕ້ອງໄດ້ຮັບອະນຸຍາດຈາກນາຍົກລັດຖະມົນຕີ ໂດຍການສະເໜີຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ;
- ຫໍພິພິດທະພັນລວມໝູ່ ແລະ ເອກະຊົນຕ້ອງໄດ້ຮັບອະນຸຍາດຈາກເຈົ້າແຂວງ ຫຼື ເຈົ້າຄອງນະຄອນ ຕາມການສະເໜີຂອງພະແນກຖະແຫຼງຂ່າວ ແລະ ວັດທະນະທຳ.

## ພາກທີ VII
## ກອງທຶນມໍລະດົກແຫ່ງຊາດ

**ມາດຕາ 60. ແຫຼ່ງກອງທຶນມໍລະດົກແຫ່ງຊາດ**

ເພື່ອຮັບປະກັນແກ່ການປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ປະຕິສັງຂອນມໍລະດົກແຫ່ງຊາດໃຫ້ຍືນຍົງ ແລະ ພັດທະນາຂຶ້ນນັ້ນ ມີຄວາມຈຳເປັນຕ້ອງສ້າງຕັ້ງກອງທຶນມໍລະດົກແຫ່ງຊາດຂຶ້ນ ຊຶ່ງໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
3. ການປະກອບສ່ວນຂອງບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍໄດ້ຈາກການນຳໃຊ້ຄຸນຄ່າຂອງມໍລະດົກແຫ່ງຊາດເຊັ່ນ: ການບໍລິການເຂົ້າຊົມ, ການເຜີຍແຜ່ໂຄສະນາ, ການຄົ້ນຄ້ວາວິໄຈມໍລະດົກແຫ່ງຊາດ, ຜູ້ປະກອບການທ່ອງທ່ຽວ, ຄ່າປັບໃໝຈາກຜູ້ລະເມີດ ແລະ ອື່ນໆ;
5. ພັນທະຈາກກິດຈະການຕ່າງໆ ທີ່ມີຜົນກະທົບຕໍ່ມໍລະດົກແຫ່ງຊາດ;
6. ລາຍໄດ້ຈາກການເຄື່ອນໄຫວກິດຈະກຳກ່ຽວກັບມໍລະດົກ ແລະ ອື່ນໆ.

**ມາດຕາ 61. ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນມໍລະດົກແຫ່ງຊາດ**

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນມໍລະດົກແຫ່ງຊາດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ ທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງມາດຕາ 60 ຂອງກົດໝາຍສະບັບນີ້, ຕາມກົດໝາຍວ່າດ້ວຍງົບປະມານ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນດັ່ງກ່າວ ມີລະບຽບການສະເພາະ.

## ພາກທີ VIII
## ອົງການຄຸ້ມຄອງ ແລະ ກວດກາ

### ໝວດທີ 1
### ອົງການຄຸ້ມຄອງ

**ມາດຕາ 62. ອົງການຄຸ້ມຄອງ**

ລັດຖະບານຄຸ້ມຄອງມໍລະດົກແຫ່ງຊາດຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳເປັນໃຈກາງໃນການຄຸ້ມຄອງ ດ້ວຍການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງມໍລະດົກແຫ່ງຊາດມີ ສີ່ຂັ້ນ ດັ່ງນີ້:

1. ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ;
2. ພະແນກຖະແຫຼງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ;
3. ຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

ສໍາລັບການຄຸ້ມຄອງມໍລະດົກແຫ່ງຊາດລາວ ທີ່ໄດ້ຮັບຮອງເອົາເປັນມໍລະດົກໂລກ ຫຼື ພາກພື້ນນັ້ນ ມີການຈັດຕັ້ງສະເພາະເຊັ່ນ: ຄະນະກໍາມະການມໍລະດົກແຫ່ງຊາດ, ຄະນະກໍາມະການມໍລະດົກທ້ອງຖິ່ນ ແລະ ຫ້ອງການມໍລະດົກໂລກ ຊຶ່ງລະບຽບການຈັດຕັ້ງ ແລະ ການເຄື່ອນໄຫວໄດ້ກໍານົດໄວ້ຕ່າງຫາກ.

**ມາດຕາ 63. ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທໍາ**

ໃນການຄຸ້ມຄອງມໍລະດົກແຫ່ງຊາດ ກະຊວງຖະແຫຼງຂ່າວ ແລະວັດທະນະທໍາ ມີສິດແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ, ສ້າງຮ່າງນະໂຍບາຍ, ແຜນຍຸດທະສາດ, ອອກນິຕິກໍາກ່ຽວກັບມໍລະດົກແຫ່ງຊາດ ເປັນຕົ້ນ ທາງດ້ານວັດທະນະທໍາ ແລະ ປະຫວັດສາດ;
2. ສໍາຫຼວດ, ເກັບກໍາຂໍ້ມູນ, ວິໄຈ, ຂຸດຄົ້ນມໍລະດົກແຫ່ງຊາດແຕ່ລະປະເພດ;
3. ໂຄສະນາເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍ, ລະບຽບກົດໝາຍກ່ຽວກັບມໍລະດົກແຫ່ງຊາດ;
4. ຊີ້ນໍາ, ຊຸກຍູ້, ຕິດຕາມ, ກວດກາ ພະແນກຖະແຫຼງຂ່າວ ແລະ ວັດທະນະທໍາ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການກ່ຽວກັບມໍລະດົກແຫ່ງຊາດ;
5. ຊີ້ນໍາ, ຊຸກຍູ້ຫ້ອງການມໍລະດົກພາກພື້ນ ແລະ ໂລກ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການກ່ຽວກັບມໍລະດົກພາກພື້ນ ແລະ ໂລກ;
6. ຂຶ້ນທະບຽນ ແລະ ອອກອະນຸຍາດກ່ຽວກັບມໍລະດົກແຫ່ງຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ສ້າງບຸກຄະລາກອນກ່ຽວກັບມໍລະດົກແຫ່ງຊາດ;
8. ເປັນໃຈກາງປະສານສົມທົບກັບຂະແໜງການອື່ນໆທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດມໍລະດົກແຫ່ງຊາດ;
9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວກັບວຽກງານມໍລະດົກແຫ່ງຊາດ;
10. ສະຫຼຸບລາຍງານ ແລະ ປະເມີນຜົນໃນການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 64. ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ ແລະ ວັດທະນະທໍາ**

ໃນການຄຸ້ມຄອງມໍລະດົກແຫ່ງຊາດ ພະແນກຖະແຫຼງຂ່າວ ແລະ ວັດທະນະທໍາແຂວງ, ນະຄອນ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຜັນຂະຫຍາຍລະບຽບກົດໝາຍ, ແຜນການ, ໂຄງການຂອງກະຊວງ ມາເປັນລະບຽບການ, ແຜນການ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ສຳຫຼວດ, ເກັບກຳຂໍ້ມູນກ່ຽວກັບມໍລະດົກແຫ່ງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ໂຄສະນາເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍ, ລະບຽບກົດໝາຍກ່ຽວກັບ ມໍລະດົກແຫ່ງຊາດ;
4. ຂຶ້ນທະບຽນ ແລະ ອອກອະນຸຍາດກ່ຽວກັບມໍລະດົກແຫ່ງຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ຊີ້ນຳ, ຊຸກຍູ້ຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳເມືອງ, ເທດສະບານໃນການຈັດຕັ້ງປະຕິບັດກ່ຽວກັບວຽກງານຄຸ້ມຄອງມໍລະດົກແຫ່ງຊາດ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ;
7. ສະຫລຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ ແລ້ວລາຍງານຕໍ່ຂັ້ນເທິງຂອງຕົນ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 65. ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳຂັ້ນເມືອງ**

ໃນການຄຸ້ມຄອງມໍລະດົກແຫ່ງຊາດ ຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ,ໂຄງການກ່ຽວກັບມໍລະດົກແຫ່ງຊາດ;
2. ສຳຫຼວດ, ເກັບກຳຂໍ້ມູນ, ຂຶ້ນບັນຊີກ່ຽວກັບມໍລະດົກແຫ່ງຊາດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ໂຄສະນາເຜີຍແຜ່, ສຶກສາອົບຮົມແນວທາງນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບມໍລະດົກແຫ່ງຊາດ;
4. ອອກອະນຸຍາດກ່ຽວກັບມໍລະດົກແຫ່ງຊາດທີ່ນອນຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ;
6. ສະຫລຸບ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ ແລ້ວລາຍງານຕໍ່ຂັ້ນເທິງຂອງຕົນ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 66. ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງມໍລະດົກແຫ່ງຊາດ ອົງການປົກຄອງບ້ານມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດ ໃນການຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ປະຕິສັງຂອນ ແລະ ນຳໃຊ້ມໍລະດົກແຫ່ງຊາດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ສຳຫຼວດ, ຂຶ້ນບັນຊີມໍລະດົກແຫ່ງຊາດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອສະເໜີໃຫ້ຂັ້ນເທິງຮັບຮອງ;
3. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານມໍລະດົກແຫ່ງຊາດຕໍ່ຂັ້ນເທິງຂອງຕົນ.

**ມາດຕາ 67. ສິດ ແລະ ໜ້າທີ່ຂອງອົງການອື່ນໆທີ່ກ່ຽວຂ້ອງ**

ອົງການອື່ນໆທີ່ກ່ຽວຂ້ອງກັບການຄຸ້ມຄອງມໍລະດົກແຫ່ງຊາດຂັ້ນສູນກາງ ແລະ ທ້ອງຖິ່ນ ມີສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ອົງການກວດກາ

**ມາດຕາ 68. ອົງການກວດກາ**

ອົງການກວດກາ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ທີ່ໄດ້ກຳນົດໄວ້ໃນ ມາດຕາ 62 ຂອງກົດໝາຍສະບັບນີ້.

ອົງການກວດກາ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດແຜນການ, ໂຄງການ, ລະບຽບກົດໝາຍກ່ຽວກັບ ການຄຸ້ມຄອງມໍລະດົກແຫ່ງຊາດ ລວມທັງສັນຍາ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ໄດ້ເຊັນ ຫຼື ເຂົ້າຮ່ວມເປັນພາຄີ;
2. ກວດກາການແກ້ໄຂຄຳສະເໜີຂອງບຸກຄົນ ຫຼື ການຈັດຕັ້ງກ່ຽວກັບມໍລະດົກແຫ່ງຊາດ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 69. ຮູບການກວດກາ**

ການກວດກາວຽກງານ ມໍລະດົກແຫ່ງຊາດ ມີ ສາມຮູບການ ຄື :

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະມີກຳນົດເວລາອັນແນ່ນອນ.
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຕ້ອງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ຈະຖືກກວດກາຊາບລ່ວງໜ້າ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 70 . ການຍ້ອງຍໍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານໃນການຄຸ້ມຄອງ, ປົກປັກຮັກສາ, ອະນຸລັກ, ບູລະນະ ແລະ ພັດທະນາມໍລະດົກແຫ່ງຊາດ ຈະໄດ້ຮັບການຍ້ອງຍໍສົມລະເສີນ ແລະ ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

ຜູ້ມີຜົນງານໃນການພົບເຫັນ, ພົບພໍ້, ຄົ້ນຄວ້າ ຫຼື ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບມໍລະດົກແຫ່ງຊາດນັ້ນ ນອກຈາກຈະໄດ້ຮັບການຍ້ອງຍໍສົມລະເສີນແລ້ວ ຍັງຈະໄດ້ຮັບຜົນປະໂຫຍດອື່ນ ຕາມລະບຽບກົດໝາຍ.

**ມາດຕາ 71. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ຖືກປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 72. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 73. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ຫົກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ